ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------ooo------------

# ວາລະສານ

ສະບັບທີ 1

ປະຈຳເດືອນ ມັງກອນ 2012




ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳ ລາຊະອານາຈັກແບນຊິກ, ລາຊະອານາຈັກລຸກຊຳບວກ, ລາຊະອານາຈັກໂຮນລັງ ແລະ ອົງການສະຫະພາບເອີຣົບ.

Avenue de la Brabançonne 19-21 – B 1000 Bruxelles- Tel : (+32) 2 740 0950 ;
Fax : (+32) 2 734 1666 Website : www. ambalao.be

# ສາລະບານ


- ໄຂປີທ່ອງທ່ຽວລາວ ແລະ ນັບຖອຍຫຼັງສູ່ປີໃໝ່ສາກົນ ຄສ 2012 .................... 03
- ທ່ານປະທານປະເທດ ຮັບສານຕາຕັ້ງ-ມອບສານແຕ່ງຕັ້ງ .................... 04
- ລັດຖະບານ ຈະເລັ່ງໃສ່ 6 ຂົງເຂດວຽກງານຈຸດສຸມ .................... 05-07
- ປີຜ່ານມາສາມາດດຶງດູດການລົງທຶນ ໄດ້ເກືອບ 400 ໂຄງການ .................... 07-08
- ອະນຸຍາດສ້າງ 126 ໂຮງງານອຸດສາຫະກຳ .................... 08
- ວາງສີລາລຶກໂຄງການກໍ່ສ້າງພື້ນຖານໂຄງລ່າງຢູ່ສາມແຂວງ .................... 09
- ວາງສີລາລຶກໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຄານ 2 .................... 09-10
- ລາວ ເຊັນໂທຣ ແອລາຍ ຈະນຳເຮືອບິນເຂົ້າມາອີກ 3 ລຳ .................... 10-11
- ສ້າງຄວາມເຂົ້າໃຈການຊຳລະອາກອນຜ່ານລະບົບທະນາຄານ .................... 11
- 67 ຮ້ານເຂົ້າຮ່ວມເທດສະການອາຫານລາວ .................... 12
- ຈະພັດທະນາບຶງທາດຫຼວງ ເປັນເຂດທ່ອງທ່ຽວ .................... 12-13
- ໂຮງງານຜະລິດຝຸ່ນກາລີ ຈະສ້າງສຳເລັດທ້າຍປີນີ້ .................... 14
- ທະນາຄານດີເດັ່ນແຫ່ງປີ 2011 .................... 15
- ບໍ່ຄຳເຊໂປນ ຈ່າຍອາກອນລ່ວງໜ້າ ເພື່ອບັນເທົາທຸກຜູ້ປະສົບໄພນໍ້າຖ້ວມ .................... 15-16
- ໄຂນຳໃຊ້ທາງຫຼວງແຫ່ງຊາດ ເລກທີ 14A .................... 16-17
- ຫາແຫຼ່ງທຶນໃນການພັດທະນາໄຟຟ້າຕາມເສັ້ນທາງ .................... 17
- ກະຊວງການເງິນ ເອົາໃຈໃສ່ການເກັບລາຍຮັບຈາກທີ່ດິນ .................... 17-18

## *ໄຂປີທ່ອງທ່ຽວລາວ ແລະ ນັບຖອຍຫຼັງສູ່ປີໃໝ່ສາກົນ ຄສ 2012*




ງານປະກາດໄຂປີທ່ອງທ່ຽວລາວ 2012 ໄດ້ມີຂຶ້ນຕອນຄ່ຳວັນທີ 31 ທັນວາ 2011 ຢູ່ຫໍວັດທະນະທຳແຫ່ງຊາດ ໂດຍມີທ່ານ ອາຊາງ ລາວລີ ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ມີລັດຖະມົນຕີ ລັດຖະມົນຕີຊ່ວຍ ພ້ອມດ້ວຍ ແຂກຖືກເຊີນ ແລະ ມວນຊົນເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ອາຊາງ ລາວລີ ໄດ້ກ່າວວ່າ: ເປັນເວລາ 11 ປີມາແລ້ວ ທີ່ ສປປ ລາວ ໄດ້ໄຂປີທ່ອງທ່ຽວຄັ້ງທຳອິດ ໃນປີ 1999-2000. ຈາກນັ້ນມາວຽກງານທ່ອງທ່ຽວ ກໍໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຈຳນວນນັກທ່ອງທ່ຽວຕ່າງປະເທດ ໄດ້ເຂົ້າມາປະເທດເຮົານັບມື້ນັບເພີ່ມຂຶ້ນ ສະເລ່ຍໃນແຕ່ລະປີ 25%, ສະເພາະປີ 2010 ມີນັກທ່ອງທ່ຽວເຂົ້າມາເຖິງ 2,5 ລ້ານຄົນ. ເພື່ອສືບຕໍ່ໂຄສະນາດຶງດູດນັກທ່ອງທ່ຽວຕ່າງປະເທດ ແລະ ສົ່ງເສີມການທ່ອງທ່ຽວພາຍໃນ "ລາວທ່ຽວລາວ" ໃຫ້ເຂັ້ມແຂງຂຶ້ນກ່ວາເກົ່າ ທັງເປັນການຊຸກຍູ້ປຸກລະດົມ ຂະບວນການພັດທະນາການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃຫ້ມີຄວາມຍືນຍົງ, ທັງເອົາໃຈໃສ່ພັດທະນາຄຸນນະພາບການບໍລິການ ຂອງຫົວໜ່ວຍທຸລະກິດການທ່ອງທ່ຽວ ໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ ເຮັດໃຫ້ການທ່ອງທ່ຽວເປັນຂະແໜງການສ້າງລາຍຮັບ ໃຫ້ນັບມື້ຫຼາຍຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ສ້າງວຽກເຮັດງານທຳໃຫ້ແກ່ສັງຄົມ ແນໃສ່ຫຼຸດຜ່ອນຄວາມທຸກຍາກໃຫ້ປະຊາຊົນເຮົາ ລັດຖະບານ ແຫ່ງ ສປປ ລາວ ຈຶ່ງຕົກລົງໄຂປີທ່ອງທ່ຽວລາວ ປີ 2012.

ດ້ວຍເຫດນັ້ນ, ຈຶ່ງຮຽກຮ້ອງມາຍັງ ປະຊາຊົນລາວບັນດາເຜົ່າທົ່ວປະເທດ, ບັນດາຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນ ຈົ່ງມີສ່ວນຮ່ວມ ແລະ ຊຸກຍູ້ເຊິ່ງກັນແລະກັນ ໃນການພັດທະນາສົ່ງເສີມການທ່ອງທ່ຽວ ເຮັດໃຫ້ປີທ່ອງທ່ຽວລາວ 2012 ໄດ້ສ່ອງແສງໃຫ້ເຫັນ ມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນຈົບງາມຂອງຊາດ, ນ້□າໃຈ ໂອບເອື້ອອາລີ ແລະ ເປັນມິດໄມຕີຂອງປະຊາຊົນລາວບັນດາເຜົ່າ ມີຜົນສຳເລັດຢ່າງຈົບງາມ ພ້ອມດຽວກັນນີ້ ທ່ານ ອາຊາງ ລາວລີ ພ້ອມດ້ວຍການນຳພັກ-ລັດ ຍັງໄດ້ໃຫ້ກຽດນັບຖອຍຫຼັງກ້າວເຂົ້າສູ່ປີໃໝ່ສາກົນ ຄສ 2012 ຮ່ວມກັບມວນຊົນພາຍໃນງານອີກດ້ວຍ.

---

## *ທ່ານປະທານປະເທດ ຮັບສານຕາຕັ້ງ-ມອບສານແຕ່ງຕັ້ງ*



ພະນະທ່ານປະທານປະເທດ ແຫ່ງ ສປປ ລາວ ຈູມມາລີ ໄຊຍະສອນ ໄດ້ຕ້ອນຮັບການເຂົ້າຍື່ນ ສານຕາຕັ້ງ ຂອງບັນດາທູດຕານຸທູດ ປະເທດເພື່ອນມິດ ໃນໂອກາດເຂົ້າມາຮັບໜ້າທີ່ເປັນທູດຄົນໃໝ່ ປະຈຳ ສປປ ລາວ ພ້ອມທັງ ໄດ້ມອບສານແຕ່ງຕັ້ງໃຫ້ທູດທູຕານຸທູດ ແຫ່ງ ສປປ ລາວ ໄປປະຈຳຢູ່ບັນດາປະເທດຕ່າງໆ ຊຶ່ງພິທີຍື່ນສານຕາຕັ້ງ ແລະ ມອບສານແຕ່ງຕັ້ງໄດ້ຈັດຂຶ້ນທີ່ສຳນັກງານປະທານປະເທດ (ຫໍຄຳ) ໃນວັນທີ 11 ມັງກອນ 2012.

ທູດຕານຸທູດບັນດາປະເທດເພື່ອນມິດ ທີ່ໄດ້ເຂົ້າຍື່ນສານຕາຕັ້ງຄັ້ງນີ້ມີ ທ່ານນາງ ມາເຣຍ ລູເມັນ ອິສເລຕາ (Maria Lumen B.Isleta) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຟີລິບປິນ ປະຈຳ ສປປ ລາວ ມີສຳ-ນັກງານຕັ້ງຢູ່ນະຄອນຫຼວງວຽງຈັນ, ທ່ານ ຈອດ ເຊນ ຊາເພັນເທຍ (Jorge Chen Charpentier) ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ແມັກຊິກ ມີສຳນັກງານຕັ້ງຢູ່ບາງກອກ ປະເທດໄທ ແລະ ທ່ານ ກຣາດສ ເຟຣດຣິກ ໂມລິນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຊູແອດ ມີສຳນັກງານຕັ້ງຢູ່ບາງກອກ, ປະເທດໄທ.

ໃ ວັນດຽວກັນໄດ້ມີພິທີມອບ ສານແຕ່ງຕັ້ງ ໃຫ້ກັບທ່ານ ເຄນທອງ ນວນທະສິງ ເພື່ອໄປຮັບໜ້າທີ່ເປັນ ເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳຍີ່ປຸ່ນ, ທ່ານ ກຸຍລີ ອ.ສຸພະເຂດ ໄປເປັນເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳອິນໂດເນເຊຍ, ທ່ານ ກຽດຕິສັກ ແກ້ວບັນດິດ ໄປເປັນເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳ ສປປ ເກົາຫຼີ ແລະ ທ່ານ ສະເຫຼີມໄຊ ກົມມະສິດ ໄປເປັນ ເອກອັກຄະລັດຖະທູດ ຜູ້ຕາງໜ້າຖາວອນ ແຫ່ງ ສປປ ລາວ ປະຈຳອົງການສະຫະປະຊາຊາດ ທີ່ ນິວຢອກ, ສະຫະລັດອາເມລິກາ.

ພະນະທ່ານ ຈູມມາລີ ໄຊຍະສອນ ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງສະແດງຄວາມຊົມເຊີຍ ຕໍ່ບັນດາທູດປະເທດເພື່ອນມິດ ທີ່ໄດ້ເຂົ້າມາຮັບໜ້າທີ່ເປັນທູດປະຈຳ ສປປ ລາວ ແລະ ທ່ານທູດທີ່ໄດ້ໄປຮັບໜ້າທີ່ໃໝ່ປະຈຳປະ-ເທດເພື່ອນມິດ ຊຶ່ງຈະເປັນການປະກອບສ່ວນອັນສຳຄັນເຂົ້າໃນການສ້າງສາຍພົວພັນການທູດ ການຮ່ວມມືລະຫວ່າງ ລາວ ແລະ ບັນດາປະເທດເພື່ອນມິດໃຫ້ນັບມື້ມີການຂະຫຍາຍຕົວຍິ່ງຂຶ້ນ.

# *ລັດຖະບານ ຈະເລັ່ງໃສ່ 6 ຂົງເຂດວຽກງານຈຸດສຸມ*



ວັນທີ 26-27 ທັນວາ 2011 ລັດຖະບານ ໄດ້ຈັດກອງປະຊຸມເປີດກວ້າງຂຶ້ນ ພາຍໃຕ້ການເປັນປະທານຂອງທ່ານ ທອງສິງ ທຳມະວົງ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເຊິ່ງມີບັນດາສະມາຊິກລັດຖະບານ, ບັນດາເຈົ້າແຂວງ ພ້ອມດ້ວຍບັນດາຕົວແທນ ຂອງອົງການພັກ-ລັດ ແລະ ບັນດາອົງການມະຫາຊົນເຂົ້າຮ່ວມ ເຊັ່ນ: ສະພາແຫ່ງຊາດ, ຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ອົງການກວດກາພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ. ກອງປະຊຸມໄດ້ປຶກສາຫາລື ແລະ ຕົກລົງຫຼາຍບັນຫາທີ່ສຳຄັນດັ່ງນີ້:

1. ໄດ້ປຶກສາຫາລື ແລະ ຮັບຮອງເອົາຮ່າງດຳລັດ ວ່າດ້ວຍມາດຕະການຟື້ນຟູຫຼັງນ້ຳຖ້ວມ ແລະ ການຜະລິດລະດູແລ້ງ ສົກປີ 2011-2012 ຊຶ່ງດຳລັດສະບັບນີ້ ໄດ້ກຳນົດບັນດາຄາດໝາຍ ບັນດານະໂຍບາຍ, ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດຕົວຈິງ ລັດຖະບານຈະໄດ້ຈັດຫາງົບປະມານ ຈຳນວນ 400 ຕື້ກີບ ຕາມການອະນຸມັດຂອງສະພາແຫ່ງຊາດ ເພື່ອສະໜອງຄວາມຕ້ອງການອັນຈຳເປັນຂອງແຕ່ລະໂຄງການ ຄື: 130 ຕື້ກີບ ສຸມໃສ່ໂຄງການເພື່ອຟື້ນຟູໂຄງລ່າງທາງດ້ານກະສິກຳ ແລະ ກະກຽມໃຫ້ແກ່ການຜະລິດລະດູແລ້ງ, 248 ຕື້ກີບ ນຳໃຊ້ໃສ່ໂຄງການເພື່ອຟື້ນຟູໂຄງລ່າງທາງດ້ານໂຍທາທິການ-ຂົນສົ່ງ, 19 ຕື້ກີບ ສົມທົບທຶນເພື່ອຊ່ວຍເຫຼືອດ້ານສັງຄົມສົງເຄາະ ສະໜອງເຄື່ອງອຸປະໂພກບໍລິໂພກ ແລະ ເຄື່ອງນຸ່ງຫົ່ມ ນັບທັງທີ່ຢູ່ອາໄສຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ, 2 ຕື້ກີບ ນຳໃຊ້ເຂົ້າໃສ່ໂຄງການຂະແໜງສຶກສາ ແລະ ສາທາ, 1 ຕື້ກີບ ສຳລັບຕິດຕາມກວດກາ ການຈັດຕັ້ງປະຕິບັດໂຄງການ. ທັງໝົດນີ້ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ຄືນສູ່ສະພາບປົກກະຕິ ແລະ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຕໍ່ເນື່ອງ ແລະ ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍດ້ານສັງຄົມ ທັງເປັນການສ້າງພື້ນຖານບາງຢ່າງ ໃຫ້ແກ່ການປ້ອງກັນຍາວນານ ກ່ຽວກັບອຸທົກກະໄພໃນຕໍ່ໜ້າ.

2. ໄດ້ປຶກສາຫາລື ແລະ ຮັບຮອງເອົາບົດສະຫຼຸບການປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານແຫ່ງລັດ ງວດທີ I ແລະ ວາງແຜນການຈຸດສຸມ ແລະ ແຜນງົບປະມານ ງວດທີ II ສົກປີ 2011-2012 ການປະຕິບັດລາຍຮັບໃນງວດ I ສາມາດປະຕິບັດໄດ້ຕາມເກນປົກກະຕິ, ພ້ອມນັ້ນ ກໍໄດ້ກວດກາຢ່າງເຂັ້ມງວດ ຕໍ່ການນຳເຂົ້າພາຫະນະ, ນ້□າມັນເຊື້ອໄຟ ແລະ ວັດສະດຸກໍ່ສ້າງຮັບໃຊ້ໂຄງການຕ່າງໆ ໃຫ້ຖືກຕ້ອງຕາມລະບຽບການທີ່ກຳນົດໄວ້.

   ສຳລັບລາຍຈ່າຍງວດ I ຜ່ານມາ ແມ່ນຮັບປະກັນລາຍຈ່າຍທີ່ເປັນບູລິມະສິດ (ເງິນເດືອນ-ເງິນອຸດໜູນ) ຈາກນັ້ນກໍແມ່ນເງິນບໍລິຫານ, ການຊຳລະໜີ້ສິນຕ່າງປະເທດ, ໜີ້ສິນພາຍໃນ ສ່ວນລາຍຈ່າຍອື່ນໆ ກໍປະຕິບັດຕາມຈັງຫວະຂອງການເກັບລາຍຮັບພາຍໃນ ສິ່ງສຳຄັນແມ່ນກຽມສະໜອງລາຍຈ່າຍ ເຂົ້າໃນວຽກງານແກ້ໄຂ ແລະ ຟື້ນຟູຜົນກະທົບ

ຈາກໄພທຳມະຊາດ ຮັບປະກັນການດຸນດ່ຽງງົບປະມານ, ດຸນດ່ຽງຂາເຂົ້າ-ຂາອອກ, ດຸນດ່ຽງການຊົມໃຊ້ ແນໃສ່ເຮັດໃຫ້ບັນລຸບັນດາຄາດໝາຍສຳຄັນທີ່ວາງໄວ້.

3. ກອງປະຊຸມໄດ້ປຶກສາຫາລື ແລະ ຮັບຮອງເອົາບົດລາຍງານ ແລະ ແຜນການຈັດສັນພູມລຳເນົາ ໂດຍຈະໄດ້ປະຕິບັດວຽກງານຈຸດສຸມຈຳນວນໜຶ່ງ ເປັນຕົ້ນແມ່ນ: ສຳຫຼວດສະຖິຕິບັນດາຄອບຄົວປະຊາຊົນ ແລະ ບ້ານ ທີ່ມີຄວາມຈຳເປັນຕ້ອງຮັບຈັດສັນພູມລຳເນົາ ໃນສະເພາະໜ້າ ແລະ ຍາວນານ. ສຳຫຼວດກຳນົດພື້ນທີ່ຈຸດສຸມໃຫ້ແຕ່ລະເປົ້າໝາຍ ໂດຍສຸມໃສ່ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ຈັດຕັ້ງຝຶກອົບຮົມວິຊາຊີບດ້ານຕ່າງໆ ເພື່ອຫັນປ່ຽນອາຊີບຂອງປະຊາຊົນທີ່ຖືເອົາການຖາງປ່າເຮັດໄຮ່ປູກເຂົ້າ ແລະ ອາຊີບທີ່ບໍ່ແນ່ນອນ ໄປສູ່ອາຊີບທີ່ໝັ້ນຄົງ ດ້ວຍການສ້າງທາງເລືອກໃໝ່ທີ່ມີລາຍໄດ້ສູງກວ່າ ໂດຍຕິດພັນກັບມູນເຊື້ອການທຳມາຫາກິນ ຂອງປະຊາຊົນບັນດາເຜົ່າ ແລະ ທ່າແຮງບົ່ມຊ້ອນໃນແຕ່ລະບໍລິເວນ ແລະ ແຕ່ລະທ້ອງຖິ່ນ. ທັງໝົດນີ້, ແນໃສ່ແກ້ໄຂບັນຫາ ການເຄື່ອນຍ້າຍຂອງພົນລະເມືອງແບບຊະຊາຍ ແລະ ເພື່ອສ້າງເງື່ອນໄຂໃຫ້ເຂົາເຈົ້າ ມີບ່ອນທຳມາຫາກິນທີ່ໝັ້ນທ່ຽງ ມີບ່ອນຢູ່ທີ່ຖາວອນ ສາມາດເຂົ້າເຖິງພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອປັບປຸງວິຖີຊີວິດຂອງປະຊາຊົນ ໃຫ້ນັບມື້ນັບດີຂຶ້ນ ແລະ ເພື່ອບັນລຸບັນດາເປົ້າໝາຍສະຫັດສະວັດ.

4. ກອງປະຊຸມໄດ້ປຶກສາຫາລື ແລະ ປະກອບຄຳເຫັນຕໍ່ບົດລາຍງານສະພາບການທຳລາຍປ່າ ການດຳເນີນທຸລະກິດໄມ້ໃນໄລຍະຜ່ານມາ ແລະ ທິດທາງແກ້ໄຂໃນຕໍ່ໜ້າ ໂດຍໄດ້ສະແດງຄວາມເປັນຫ່ວງເປັນໄຍ ແລະ ປະກອບຄຳເຫັນຢ່າງກົງໄປກົງມາ ຕໍ່ພຶດຕິກຳທີ່ລະເມີດກົດໝາຍຂອງກຸ່ມຄົນຕ່າງໆ ຕໍ່ການບຸກລຸກປ່າໄມ້, ການດຳເນີນທຸລະກິດໄມ້ໄດ້ສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງ ຕໍ່ປະເທດຊາດພວກເຮົາ. ຕໍ່ບັນຫາດັ່ງກ່າວ, ລັດຖະບານຈະໄດ້ຈັດກອງປະຊຸມສະເພາະ ເພື່ອປຶກສາຫາລືມາດຕະການ, ວິທີການແກ້ໄຂຕໍ່ໄປໃຫ້ມີປະສິດທິຜົນ ແລະ ເຂັ້ມງວດກ່ວາເກົ່າ.

5. ກອງປະຊຸມໄດ້ປຶກສາຫາລື ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດ ແຜນການປູກໄມ້ຟື້ນຟູປ່າການຂຸດຄົ້ນໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ ປະຈຳສົກປີ 20102011 ແລະ ຂໍອະນຸມັດແຜນການຈັດຕັ້ງປະຕິບັດປະຈຳສົກປີ 2011-2012 ເຊິ່ງບົດລາຍງານໄດ້ຍົກບາງວຽກງານທີ່ພົ້ນເດັ່ນຄື: ແຜນການປູກໄມ້ ແລະ ຟື້ນຟູປ່າໄມ້ຂຸດຄົ້ນໄມ້ ໃຫ້ໄປຕາມແຜນເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ປະສານງານກ່ຽວກັບປ່າໄມ້ ແລະທຸລະກິດໄມ້ ແນໃສ່ຮັບປະກັນການປະຕິບັດທິດທາງ ແລະ ຄາດໝາຍສູ້ຊົນ ໃຫ້ມີເນື້ອທີ່ປົກຫຸ້ມປ່າໄມ້ທົ່ວປະເທດ 70% ໃນປີ 2020.

6. ກອງປະຊຸມໄດ້ຮັບຟັງການລາຍງານ ການປະຕິບັດແຜນວຽກງານຈຸດສຸມ ໄຕມາດ I ແລະ ແຜນວຽກງານຈຸດສຸມໄຕມາດ II ສົກປີ 2011-2012 ຂອງລັດຖະບານ ຊຶ່ງຈະສຸມໃສ່ 6 ຂົງເຂດວຽກງານດັ່ງນີ້:

   1. ແຜນວຽກພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ແກ້ໄຂລະເບີດບໍ່ທັນແຕກ.

   2. ແຜນວຽກພັດທະນາເສດຖະກິດ ການຈັດເກັບລາຍຮັບເຂົ້າງົບປະມານ.

   3. ແຜນວຽກວັດທະນະທຳ-ສັງຄົມ.

   4. ແຜນວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

5. ແຜນວຽກງານບໍລິຫານ ແລະ ປົກຄອງ.

6. ແຜນວຽກງານການຕ່າງປະເທດ.

ເວົ້າລວມແລ້ວ ບັນຫາທີ່ຍົກມາປຶກສາຫາລືໃນກອງປະຊຸມນີ້ ລ້ວນແຕ່ມີຄວາມສຳຄັນ ແລະ ເຄັ່ງຮ້ອນຊຶ່ງມີຄວາມຕິດພັນໂດຍກົງກັບຊີວິດຕົວຈິງ ຂອງປະຊາຊົນບັນດາເຜົ່າ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຫານ ຜູ້ປົກຄອງທຸກຂັ້ນຂອງພັກ-ຂອງລັດເຮົາ ໃນການແກ້ໄຂບັນຫາຕ່າງໆຂອງຊາດ ຕອນທ້າຍ ທ່ານນາຍົກລັດຖະມົນຕີ ໄດ້ຮຽກຮ້ອງ ແລະ ຊີ້ນຳຕໍ່ກອງປະຊຸມບາງຈຸດສຳຄັນດັ່ງນີ້:

1. ສຸມໃສ່ວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນຄວາມສະຫງົບປອດໄພໃນທຸກດ້ານ ໂດຍສະເພາະ ແມ່ນກອງປະຊຸມສຸດຍອດອາເຊັມໃນທ້າຍປີ 2012.

2. ຊຸກຍູ້ການພັດທະນາເສດຖະກິດ ແກ້ໄຂ ແລະ ຟື້ນຟູຜົນກະທົບຈາກໄພນ້ຳຖ້ວມ ໃຫ້ກັບຄືນສູ່ສະພາບປົກກະຕິ.

3. ຍູ້ແຮງຂະບວນການແຂ່ງຂັນ ຮັກຊາດ-ພັດທະນາ ສຸມໃສ່ພັດທະນາຕົວເມືອງໃຫ້ສວຍງາມສົດໃສ (ສ້າງຕົວເມືອງສີຂຽວ) ໂດຍການເຂົ້າຮ່ວມຢ່າງເປັນທາງການຂອງທຸກພາກສ່ວນ ທຸກຄົວເຮືອນ.

4. ເອົາໃຈໃສ່ປັບປຸງແກ້ໄຂ ບັນດາລະບອບ-ລະບຽບການບໍລິຫານວຽກ ໃຫ້ເຂົ້າແບບເຂົ້າແຜນທີ່ວ່ອງໄວໂປ່ງໃສ ທົດແທນໃຫ້ຄວາມອືດອາດຊັກຊ້າທີ່ເຄີຍເປັນມາ.

---

## *ປີຜ່ານມາສາມາດດຶງດູດການລົງທຶນ ໄດ້ເກືອບ 400 ໂຄງການ*



ວັນທີ 5 ມັງກອນ 2012 ນີ້, ກະຊວງແຜນການ ແລະ ການລົງທຶນ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາສະພາບການຊີ້ນຳ-ນຳພາວຽກງານຂອງຄະນະບໍລິຫານງານພັກຂອງຕົນ ປະຈຳສົກປີ 2011-2012 ແລະ ທິດທາງແຜນການສົກປີ 2011-2012 ທີ່ກະຊວງ ໂດຍເປັນປະທານຂອງທ່ານ ສົມດີ ດວງດີ ເລຂາຄະນະບໍລິຫານງານພັກ ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ມີບັນດາຄະນະບໍລິຫານງານ ລັດຖະມົນຕີຊ່ວຍວ່າການ ຫົວໜ້າ ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນ ເຂົ້າຮ່ວມ.

ໃນ 1 ປີຜ່ານມາ ຄະນະບໍລິຫານງານພັກກະຊວງແຜນການ ແລະ ການລົງທຶນ ໄດ້ເອົາໃຈໃສ່ຊີ້ນໍາ-ນໍາພາບັນດາຂົງ-ເຂດວຽກງານ ເຮັດໃຫ້ມີຜົນສໍາເລັດຫຼາຍດ້ານ ເປັນຕົ້ນ ວຽກງານແຜນການ ຄະນະພັກໄດ້ຖືເປັນບັນຫາສໍາຄັນໃນການກໍານົດຈັງຫວະການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໄດ້ຊີ້ນໍາການສ້າງໂຄງການແຕ່ລະຂະແໜງການ ແລະທ້ອງຖິ່ນ ແບ່ງທຶນໃຫ້ສົມເຫດສົມຜົນ ຈັດສັນໂຄງການລົງທຶນຂອງລັດ ໃຫ້ເຂົ້າສູ່ລະບົບລະບຽບດີກ່ວາເກົ່າ ຕໍ່ກັບວຽກງານການສົ່ງເສີມການລົງທຶນ ຄະນະພັກກໍໄດ້ເຮັດໜ້າທີ່ຊີ້ນໍາ-ນໍາພາປັບປຸງບັນດາລະບຽບການທີ່ເປັນອຸປະສັກກີດຂວາງການລົງທຶນ ແນໃສ່ເພື່ອສ້າງສະພາບແວດລ້ອມທີ່ດີເອື້ອອໍານວຍໃຫ້ແກ່ນັກລົງທຶນ ແລະ ກ້າວໄປສູ່ການບັນລຸເປົ້າໝາຍຕົ້ນຕໍ ຄື: ໃຫ້ຜູ້ລົງທຶນໄດ້ຮັບ 3 ໃບອະນຸຍາດຢູ່ບ່ອນດຽວກັນ ຮັບປະກັນຄວາມປອດໃສ ວ່ອງໄວ ຍົກສູງຄວາມຮັບຜິດ-ຊອບໃນການເປັນເສນາທິການໃຫ້ຂັ້ນເທິງ ໃນການຄົ້ນຄ້ວາສ້າງແຜນການຄຸ້ມຄອງ ແລະ ການດຶງດູດນັກລົງທຶນມາລົງ-ທຶນຢູ່ ສປປ ລາວ ຈາກຄວາມພະຍາຍາມດັ່ງກ່າວ ເຮັດໃຫ້ຕົວເລກການລົງທຶນລື່ນຄາດໝາຍທີ່ວາງໄວ້ ຄື: ສາມາດດຶງດູດການລົງທຶນໄດ້ທັງໝົດ 389 ໂຄງການ ມີມູນຄ່າການລົງທຶນ 1,9 ຕື້ໂດລາສະຫະລັດ ຫຼື ປະມານ 15.720 ຕື້ກີບ ຖ້າທຽບໃສ່ມູນຄ່າອະນຸຍາດລົງທຶນໃນປີຜ່ານມາ ແມ່ນດຶງດູດໄດ້ເພີ່ມ 18% ແລະ ຖ້າທຽບໃສ່ແຜນການປີ ກໍສາມາດບັນລຸໄດ້ເກີນຄາດໝາຍ 12,8% ການນໍາເຂົ້າທຶນກໍສູງເຊັ່ນດຽວກັນ ຄື: 2,09 ຕື້ໂດລາ ຫຼື ປະມານ 16.000 ຕື້ກີບໃນນັ້ນເປັນເງິນສົດ 495 ລ້ານໂດລາ ຫຼື ປະມານ 4.000 ຕື້ກີບ ແລະ ເປັນວັດຖຸ 1,59 ຕື້ໂດລາ ຫຼື ປະມານ 12.800 ຕື້ກີບ ຖ້າທຽບໃສ່ແຜນການປີທີ່ກໍານົດໄວ້ 1,2 ຕື້ໂລດາ ກໍຖືວ່າປະຕິບັດໄດ້ລື່ນຄາດໝາຍ.

ໃນກອງປະຊຸມຍັງໄດ້ມີພິທີມອບໃບຢັ້ງຢືນໜ່ວຍພັກເຂັ້ມແຂງ-ຮູ້ນໍາພາຮອບດ້ານ ໃຫ້ 8 ໜ່ວຍພັກ ປະກາດຂໍ້ແຂ່ງຂັນສືບຕໍ່ສ້າງໜ່ວຍພັກແຂງ-ຮູ້ນໍາພາຮອບດ້ານ ຈໍານວນ 12 ໜ່ວຍພັກ ມອບຫຼຽນປ້ອງກັນຄວາມສະຫງົບ ແລະ ມອບໃບຍ້ອງຍໍໃຫ້ພະນັກງານທີ່ມີຜົນງານດີເດັ່ນ ປະຈໍາປີ 2010-2011 ຕື່ມອີກ.

---

## *ອະນຸຍາດສ້າງ 126 ໂຮງງານອຸດສາຫະກໍາ*

ສົກປີ 2010-2011 ພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງວຽງຈັນ ໄດ້ອອກອະນຸຍາດດໍາເນີນກິດຈະການໃໝ່ດ້ານໂຮງງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ຈໍານວນ 126 ໂຮງງານ ມູນຄ່າ 178.512.559.000 ກີບ, ໃນນັ້ນເປັນທຶນຄົງທີ່ 130.720.490.000 ກີບ.

ທ່ານ ເບີລິນ ເພັດຈັນທະລາດ ໄດ້ລາຍງານການເຄື່ອນໄຫວ 1 ປີຜ່ານມາ ມີບາງຕອນສໍາຄັນວ່າ: ຄະນະພັກຄະນະນໍາ ຕະຫຼອດສະມາຊິກພັກ-ພະນັກງານ ໄດ້ຖືເອົາວຽກງານການເມືອງ-ແນວຄິດ ເປັນວຽກງານສໍາຄັນ ກໍາແໜ້ນແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ກໍຄືມະຕິຄໍາສັ່ງຂອງຂັ້ນເທິງ ຕັ້ງໜ້າປະຕິບັດວຽກງານວິຊາສະເພາະຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ເຊິ່ງມີວຽກງານຫຼາຍດ້ານປະສົບຜົນສໍາເລັດ ຕາມຄາດໝາຍວາງໄວ້ສົກປີ 2010-2011 ໄດ້ຮັບງົບປະມານທັງໝົດ 4.625.288.150 ກີບ, ສາມາດປະຕິບັດໄດ້ 99,28% ວຽກງານການຄ້າພາຍໃນ ໄດ້ເອົາໃຈໃສ່ຄຸ້ມຄອງຕິດຕາມລາຄາສິນຄ້າ ຕາມທ້ອງຕະຫຼາດເປັນປົກກະຕິ. ຄຽງຄູ່ກັນນັ້ນ, ພະແນກອຸດສາຫະກໍາ ແລະ ການຄ້າ ຍັງໄດ້ຮັບແຈ້ງຂຶ້ນ-ດັດແກ້ທະບຽນວິສາຫະກິດ (ວັນທີ 1/10/2010-30/9/2011) ຈໍານວນ 546 ຫົວໜ່ວຍ, ເປັນທຶນທັງໝົດ 145.194.112.379 ກີບ, ວຽກງານຄຸ້ມຄອງການນໍາເຂົ້າ-ສົ່ງອອກ ສິນຄ້າຂາອອກມີ 483.384.605, 86 ໂດລາສະຫະລັດ ຫຼື ປະມານ 3.867.076.840.000 ກີບ ທຽບໃສ່ສົກ 2009-2010 ຫຼຸດລົງ 28,43% ແລະ ສິນຄ້າຂາເຂົ້າມີ 910.372.437 ໂດລາ ຫຼື ປະມານ 7.282.979.496.000 ກີບ.

ນະຄອນຫຼວງວຽງຈັນ ມີຕະຫຼາດທັງໝົດ 82 ແຫ່ງ. ໃນນັ້ນ ຕະຫຼາດໃຫຍ່ 13 ແຫ່ງ, ກາງ 14 ແຫ່ງ ແລະ ຕະຫຼາດນ້ອຍ 55 ແຫ່ງ.

---

## ວາງສິລາລຶກໂຄງການກໍ່ສ້າງພື້ນຖານໂຄງລ່າງຢູ່ສາມແຂວງ

ພິທີວາງສິລາລຶກ ສຳລັບສາມໂຄງການກໍ່ສ້າງໂຄງລ່າງ ທີ່ ແຂວງເຊກອງ ສາລະວັນ ແລະ ສະຫວັນນະເຂດ ໄດ້ຈັດຂຶ້ນໃນວັນທີ 11-13 ທັນວາ 2011 ທີ່ເມືອງກະລຶມ, ຕະໂອ້ຍ ແລະ ວິລະບູລີ. ທັງສາມໂຄງການຊ່ວຍເຫຼືອດ້ານມະນຸດສະທຳນີ້ ແມ່ນໄດ້ຮັບການສະໜັບສະໜູນດ້ານທຶນຮອນ ຈາກລັດຖະບານ ສະຫະລັດອາເມລິກາ ແລະ ກອງບັນຊາການທະຫານສະຫະລັດ ປະຈຳພາກພື້ນປາຊີຟິກ (USPACOM) ເຊິ່ງເປັນພາກສ່ວນໜຶ່ງຂອງໂຄງການ ໃຫ້ການຊ່ວຍ-ເຫຼືອດ້ານມະນຸດສະທຳຢ່າງຕໍ່ເນື່ອງຂອງ USPACOM.

ໂຄງການດັ່ງກ່າວ, ລວມມີການກໍ່ສ້າງໂຮງຮຽນປະຖົມຫຼັງໃໝ່ ໃຫ້ເມືອງກະລຶມ, ການກໍ່ສ້າງໂຮງຮຽນມັດທະຍົມຫຼັງໃໝ່ ໃຫ້ເມືອງຕະໂອ້ຍ ແລະ ການກໍ່ສ້າງໂຮງຮຽນມັດທະຍົມຫຼັງໃໝ່ (ອາຄານສອງຊັ້ນ) ໃຫ້ເມືອງວິລະບູລີ ການກໍ່ສ້າງທັງສາມໂຄງການ ຄາດວ່າຈະສຳເລັດໃນເດືອນ ທັນວາ ປີ 2012.

ຜູ້ຕາງໜ້າຈາກແຂວງເຊກອງ ທີ່ເຂົ້າຮ່ວມໃນພິທີຢູ່ເມືອງກະລຶມ ມີທ່ານ ຂັນແກ້ວ ໂຮມອິນຕາ, ຮອງຫົວໜ້າພະແນກສຶກສາແຂວງເຊກອງ ແລະ ທ່ານ ຂັນຕີ ສີລະວົງສາ, ເຈົ້າເມືອງກະລຶມ. ຜູ້ຕາງໜ້າຈາກແຂວງສາລະວັນ ເຂົ້າຮ່ວມໃນພິທີຢູ່ເມືອງຕະໂອ້ຍ ມີທ່ານ ບຸນທັນ ວົງສະກຸນ, ຮອງຫົວໜ້າພະແນກສຶກສາແຂວງສາລະວັນ ແລະ ທ່ານ ບຸນໂຮມ ພົງສາລີ, ເຈົ້າເມືອງຕະໂອ້ຍ. ຜູ້ຕາງໜ້າຈາກແຂວງ ສະຫວັນນະເຂດ ເຂົ້າຮ່ວມພິທີຢູ່ເມືອງວິລະບູລີ ມີທ່ານ ສະຖຽນ ສີດາວອນ, ຮອງເຈົ້າເມືອງວິລະບູລີ ແລະ ທ່ານ ວຽງໄຊ ສາຍສະຫວາດ ຮອງຫົວໜ້າຫ້ອງການສຶກສາເມືອງວິລະບູລີ, ທ່ານ ຈັນຊະນະ ໄຊຍະຈັກ ຕາງໜ້າກະຊວງການຕ່າງປະເທດ ແລະ ທ່ານຮ້ອຍໂທ ສຸລະໄຊ ສຸກແສງຕາ ຕາງໜ້າກະຊວງປ້ອງກັນປະເທດ ກໍໄດ້ເຂົ້າຮ່ວມໃນພິທີດັ່ງກ່າວ.

---

## ວາງສິລາລຶກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຄານ 2



ພິທີວາງສິລາລຶກ ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຄານ 2 ໄດ້ມີຂຶ້ນໃ ວັນທີ 26 ທັນວາ 2011 ຢູ່ບໍລິເວນເຂື່ອນດັ່ງກ່າວ (ຫ່າງຈາກເທດສະບານເມືອງຊຽງເງິນ, ແຂວງຫຼວງພະບາງ ປະມານ 35 ກິໂລແມັດ) ໂດຍມີທ່ານ

ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ, ທ່ານນາງ ປູ້ຈຽນ ກົວ, ເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ, ທ່ານລັດຖະມົນຕີວ່າການ , ລັດຖະມົນຕີຊ່ວຍວ່າການ ພ້ອມດ້ວຍແຂກຖືກເຊີນ ເຂົ້າຮ່ວມ.

ທ່ານ ສີສະຫວາດ ທິຣະວົງ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ ໄດ້ກ່າວວ່າ: ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຄານ 2 ແມ່ນໂຄງການຂອງລັດຖະບານ ມອບໃຫ້ລັດວິສາຫະກິດໄຟຟ້າລາວ (ຟຟລ) ເປັນຜູ້ຈັດຕັ້ງປະຕິບັດ ແລະ ບໍລິສັດຊີໂນໄຮໂດຣ ແຫ່ງ ສປ ຈີນ ເປັນຜູ້ຮັບເໝົາ) ມີກຳລັງຕິດຕັ້ງ 130 ເມັກກາວັດ ປະກອບມີຈັກ 2 ເຄື່ອງ ແຕ່ລະເຄື່ອງມີກຳລັງຕິດຕັ້ງ 65 ເມັກກາວັດ ສາມາດຜະລິດພະລັງງານໄຟຟ້າໄດ້ 558 ລ້ານກິໂລວັດໂມງຕໍ່ປີ

ພະລັງງານໄຟຟ້າທີ່ຜະລິດຈາກເຂື່ອນນ້ຳຄານ 2 ຈະສົ່ງເຂົ້າລະບົບຕາຂ່າຍໄຟຟ້າຂອງ ຟຟລ ດ້ວຍແຮງດັນ 115 ກິໂລໂວນ 2 ວົງຈອນ ເຂົ້າຫາສະຖານີໄຟຟ້າແຂວງຫຼວງພະບາງ 2 ທີ່ເມືອງຊຽງເງິນ ເພື່ອຕອບສະໜອງພະລັງ-ງານໄຟຟ້າ ໃຫ້ແກ່ແຂວງຕ່າງໆທາງພາກເໜືອ. ໂຄງການດັ່ງກ່າວຈະນຳໃຊ້ທຶນທັງໝົດ 308,5 ລ້ານໂດລາສະຫະລັດ ຫຼື ປະມານ 2.470 ຕື້ກີບ ເຊິ່ງແມ່ນທຶນໃຫ້ກູ້ຢືມຈາກທະນາຄານນ້ຳ (IM Bank ສປ ຈີນ 95% ແລະ ທຶນສົມທົບຂອງ ຟຟລ 5% ປັດຈຸບັນ ໄດ້ຜ່ານການອອກແບບ ກະກຽມ ແລະ ລົງມືກໍ່ສ້າງໄດ້ 15% ແລະ ຄາດວ່າການກໍ່ສ້າງຈະສຳເລັດ 100% ໃນປີ 2015.

ຜົນສຳເລັດຂອງ ໂຄງການກໍ່ສ້າງເຂື່ອນໄຟຟ້ານຳຄານ 2 ນີ້ ບໍ່ພຽງແຕ່ຈະເປັນການປະກອບສ່ວນ ເຂົ້າໃນການເພີ່ມທະວີການພັດທະນາ ລະບົບໄຟຟ້າຢູ່ປະເທດເຮົາ ໃຫ້ສືບຕໍ່ຂະຫຍາຍຕົວ, ໂຄງການນີ້ ຍັງຈະກາຍເປັນເງື່ອນໄຂພື້ນຖານໂຄງລ່າງທີ່ສຳຄັນ ໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງພາກເໜືອ ໃຫ້ມີຄວາມສະດວກຫຼາຍຂຶ້ນ.

---

## *ລາວ ເຊັນໂທຣ ແອລາຍ ຈະນຳເຮືອບິນເຂົ້າມາອີກ 3 ລຳ*




ບໍລິສັດລາວ ເຊັນໂທຣ ແອລາຍ ມະຫາຊົນ ຈັດຖະແຫຼງຂ່າວສາຍການບິນລາວ ເຊັນໂທຣ ແອລາຍ ໃນວັນທີ 5 ມັງກອນ ຜ່ານມາ ທີ່ຫ້ອງປະຊຸມ ທະນາຄານພົງສະຫວັນ ໂດຍມີອຳນວຍການບໍລິສັດ, ນັກບິນ, ພະນັກງານບໍລິການເທິງເຮືອບິນ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານນາງ ສະຫວັນພອນ ພົງສະຫວັນ, ອໍານວຍການໃຫຍ່ບໍລິສັດລາວ ໄດ້ກ່າວວ່າ: ປັດຈຸບັນ ບໍລິສັດ ໄດ້ສໍາເລັດການກຽມຄວາມພ້ອມໃນດ້ານຕ່າງໆເກືອບ 100%, ບໍລິສັດລາວ ໄດ້ຈັດຊື້ເຮືອບິນໄອພົ່ນລຸ້ນໂບອິງ 737-400 ຂະໜາດ 168-170 ບ່ອນນັ່ງ ເປັນເຮືອບິນທັນສະໄໝຈາກຕ່າງປະເທດ ຈໍານວນ 2 ລໍາ ມາເຖິງນະຄອນຫຼວງວຽງຈັນ ເປັນທີ່ຮຽບຮ້ອຍແລ້ວ ເຮືອບິນທັງ 2 ລໍາ ໄດ້ຜ່ານຂະບວນການກວດກາ ແລະ ໄດ້ຮັບໃບຢັ້ງຢືນເດີນອາກາດ (C of A) ແລະ ໃບຢັ້ງຢືນການໂອນທະບຽນເປັນລາວ (C of R) ຢ່າງສົມບູນ. ເຮືອບິນ 2 ລໍາ ເປັນພຽງສ່ວນໜຶ່ງໃນແຜນການຈັດຊື້ເຮືອບິນຂອງບໍລິສັດ ເພື່ອມາໃຫ້ບໍລິການລະຫວ່າງປະເທດ ໃນເບື້ອງຕົ້ນບໍລິສັດຍັງມີແຜນຈະຈັດຊື້ເຮືອບິນລຸ້ນໂບອິງ 737-800 ເພີ່ມອີກໃນຕໍ່ໜ້າ ສໍາລັບເປົ້າໝາຍຂອງບໍລິສັດຮອດປີ 2015 ມີແຜນຈະຈັດຊື້ເຮືອບິນໄອພົ່ນຊູຄອຍຊຸບເປີ ເຈັດ ອີກຈໍານວນ 9 ລໍາ, ໃນນັ້ນ 3 ລໍາທໍາອິດ ຕາມແຜນແມ່ນຈະນໍາເຂົ້າມາໃນທ້າຍປີ 2012.

ສໍາລັບແຜນການບິນໃນເບື້ອງຕົ້ນ ບໍລິສັດມີແຜນຈະບິນໄປບັນດາປະເທດໃກ້ຄຽງໃນອາຊຽນ ເຊັ່ນ: ໄທ, ຫວຽດນາມ, ກໍາປູເຈຍ, ສປ ຈີນ, ມາເລເຊຍ ແລະ ມີແຜນຂະຫຍາຍໄປປະເທດອື່ນໆໃນຕໍ່ໜ້າ ຊຶ່ງການຈໍາໜ່າຍປີ້ຍົນ ຄາດວ່າຈະເລີ່ມຈໍາໜ່າຍປີ້ໃນໄວໆນີ້. ປັດຈຸບັນ ບໍລິສັດລາວ ມີຄວາມພ້ອມທາງດ້ານລະບົບການບໍລິການຈໍາໜ່າຍປີ້ຍົນ ຜ່ານບໍລິສັດຕົວແທນ ທັງຢູ່ພາຍໃນ ແລະ ຕ່າງປະເທດ ແລະ ຍັງມີແນວທາງທີ່ຈະນໍາໃຊ້ລະບົບ ການຂາຍປີ້ຍົນທີ່ສາມາດເຊື່ອມຕໍ່ ກັບຕົວແທນຈໍາໜ່າຍປີ້ຍົນທົ່ວໂລກລະບົບ (Global Distribution System) ໃນຕໍ່ໜ້າ. ທັງນີ້ບໍລິສັດລາວ ເຊັນໂທຣ ແອລາຍ ມະຫາຊົນ ມີຄວາມມຸ່ງໝັ້ນເພື່ອປະກອບສ່ວນອັນສໍາຄັນ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ທັງໃຫ້ບໍລິການຮັບໃຊ້ສັງຄົມດ້ວຍຄຸນນະພາບທີ່ດີເລີດ.

---

## *ສ້າງຄວາມເຂົ້າໃຈການຊໍາລະອາກອນຜ່ານລະບົບທະນາຄານ*



ຜູ້ຄ້າ-ຂາຍຢູ່ທີ່ຕະຫຼາດເຊົ້າຊອບປິງມໍ ນະຄອນຫຼວງວຽງຈັນ ໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບການຊໍາລະອາກອນມອບເໝົາ ຜ່ານລະບົບທະນາຄານ ໂດຍລະບົບມີຄວາມສະດວກວ່ອງໄວ ແລະ ຖືກຕ້ອງ.

ກະຊວງການເງິນ ໄດ້ຈັດສໍາມະນາກ່ຽວກັບ ການສໍາລະອາກອນມອບເໝົາ ຜ່ານລະບົບທະນາຄານ ໃຫ້ແກ່ຜູ້ປະກອບການຢູ່ຕະຫຼາດເຊົ້າຊອບປິງມໍ 400 ກ່ວາຮ້ານ ໃນຕອນເຊົ້າວັນທີ 6 ມັງກອນ 2012 ທີ່ສະໂມສອນ ສູນກາງແນວລາວສ້າງຊາດ ໂດຍການເຂົ້າຮ່ວມຂອງທ່ານ ສັນຍາ ປຣະເສີດ, ຫົວໜ້າເຕັກໂນໂລຊີຂໍ້ມູນຂ່າວສານ, ກະຊວງການເງິນ ແລະ ຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງ.

ການຊໍາລະອາກອນ ຫຼື ການມອບເໝົາລາຍຮັບງົບປະມານ ຜ່ານທະນາຄານ ເປັນການຍົກສູງຄຸນຄ່າຂອງການບໍລິການ ໂດຍຈະສາມາດຈໍາແນກໄດ້ເງິນປອມ ເປັນການເກັບເງິນຂາດ-ເງິນເກົ່າເຂົ້າໃນຄັງ ສາມາດຮັກສາ ແລະ ຄຸ້ມຄອງປະລິມານເງິນສົດ ໃຫ້ເຂົ້າໃນລະບົບທະນາຄານ ຖ້າມີການຊໍາລະຜ່ານລະບົບທະນາຄານຫຼາຍເທົ່າໃດ ກໍຍິ່ງເຮັດ

ໃຫ້ການຈໍລະຈອນເງິນສົດ ແລະ ການຄຸ້ມຄອງງ່າຍຍິ່ງຂຶ້ນ ສຳລັບການຈັດຕັ້ງປະຕິບັດຢູ່ຕະຫຼາດເຊົ້າຊອບປີງມໍ ຜູ້ປະກອບການຈະໄດ້ຊໍາລະອາກອນແບບມອບເໝົາ ເປັນລາຍເດືອນທີ່ທະນາຄານໂດຍກົງກໍໄດ້ ໂດຍເຈົ້າໜ້າທີ່ຈະລົງແຈກຢາຍ "ໃບຊໍາລະອາກອນ" ແກ່ຜູ້ປະກອບການໃນທຸກໆຕົ້ນເດືອນ.

---

## *67 ຮ້ານເຂົ້າຮ່ວມເທດສະການອາຫານລາວ*



ໃນວັນທີ 5 ມັງກອນ 2012, ທີ່ຫໍວັດທະນາທໍາແຫ່ງຊາດ ໄດ້ຈັດພິທີເປີດງານເທດສະການອາຫານລາວ ຄັ້ງທີ VII ປະຈໍາປີ 2012. ງານດັ່ງກ່າວໄດ້ຈັດຂຶ້ນເປັນໄລຍະເວລາ 3 ວັນ ໂດຍເລີ່ມແຕ່ວັນທີ 5-7 ມັງກອນ ທີ່ຫໍວັດທະນະທໍາແຫ່ງຊາດ ໂດຍໄດ້ມີ 76 ຮ້ານ ຈາກ 9 ແຂວງ ນອກຈາກນີ້ ຍັງມີຮ້ານອາຫານຈາກປະເທດໃກ້ຄຽງ ແລະ ສະຖານທູດເຂົ້າຮ່ວມ ພິເສດໃນງານດັ່ງກ່າວຍັງມີ ການສາທິດວິທີການປຸງແຕ່ງອາຫານລາວ ຈາກອາຈານຜູ້ທີ່ມີປະສົບການສູງຈາກວິທະຍາໄລປາກປ່າສັກ.ສະມາຄົມນັກທຸລະກິດແມ່ຍິງລາວ ໄດ້ຈັດງານເທດສະການອາຫານລາວ ຄັ້ງທີ VII ປະຈໍາປີ 2012 ເພື່ອເປັນການສ້າງຂະບວນການຂໍານັບຮັບຕ້ອນວັນແມ່ຍິງສາກົນ ທັງຍັງເປັນການເຕົ້າໂຮມນັກທຸລະກິດແມ່ຍິງລາວທົ່ວປະເທດ ໃຫ້ມີຄວາມສາມັກຄີ ແລະ ຄ້າຂາຍຮ່ວມກັນ ເພື່ອຖອດຖອນບົດຮຽນ ໃນການປຸງແຕ່ງອາຫານ. ພ້ອມກັນນັ້ນ, ກໍເພື່ອເປັນການຊຸກຍູ້ໃຫ້ສິນຄ້າກະສິກໍາ ອຸດສະຫະກໍາ ແລະ ຫັດຖະກໍາ ໃຫ້ນັກທ່ອງທ່ຽວໄດ້ຮັບຮູ້ໄດ້ຢ່າງກ້ວາງຂວາງ ເພື່ອສົ່ງເສີມໃຫ້ເສດຖະກິດມີການຂະຫຍາຍຕົວ ພ້ອມນັ້ນຍັງເປັນການປຸກລະດົມໃຫ້ແມ່ຍິງລາວ ຮັກສາຂະນົບທໍານຽມ ໃນການປຸງແຕ່ງອາຫານລາວ ເອົາໄວ້ໃຫ້ຢູ່ຄູ່ກັບສັງຄົມລາວຕະຫຼອດໄປ.

---

## *ຈະພັດທະນາບຶງທາດຫຼວງ ເປັນເຂດທ່ອງທ່ຽວ*



ພິທີເຊັນສັນຍາວ່າດ້ວຍ ການພັດທະນາເຂດເສດຖະກິດສະເພາະບຶງທາດຫຼວງ (ເມືອງທ່ອງທ່ຽວໜອງນ້ຳທຳມະຊາດ ແລະ ວັດທະນະທຳ) ຢູ່ເມືອງໄຊເຊດຖາ ແລະ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ (ຕາງໜ້າໂດຍ ຄະນະກຳມະການແຫ່ງຊາດລາວ ເພື່ອຄຸ້ມຄອງເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຄຂພສ) ກັບບໍລິສັດອະສັງຫາລິມະຊັບ ຫວ່ານເຟີ້ງ ຊຽງໄຮ້ ສປ ຈີນ ຈຳກັດ ໄດ້ຈັດຂຶ້ນໃນວັນທີ 28 ທັນວາ 2011, ທີ່ໂຮງແຮມ ດອນຈັນ ພາເລດ, ນະຄອນຫຼວງວຽງຈັນ ໂດຍການຮ່ວມລົງນາມຂອງທ່ານ ນາງ ບຸນເພັງ ມູນໂພໄຊ, ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ, ຮອງປະທານຜູ້ປະຈຳການ ຄຂພສ ຕາງໜ້າລັດຖະບານລາວ ແລະ ທ່ານ ກົວພິງຫວງ, ປະທານບໍລິສັດ ອະສັງຫາລິມະຊັບ ຫວ່ານເຟີ້ງ ຊຽງໄຮ້ ສປ ຈີນ ຈຳກັດ ເປັນກຽດເຂົ້າຮ່ວມມີທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດ ທັງເປັນປະທານ ຄຂພສ ພ້ອມດ້ວຍທ່ານ ດຣ.ອານຸພາບ ຕຸນາລົມ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ທ່ານ ນາງ ປູ້ ຈຽນກົວ, ເອກອັກຄະລັດຖະທູດ ສປ ຈີນ ປະຈຳລາວ ບັນດາພະນັກງານຂັ້ນສູງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ໂຄງການພັດທະນາ ເຂດເສດຖະກິດສະເພາະບຶງທາດຫຼວງນີ້ ແມ່ນລັດຖະບານ ສປປ ລາວ ໄດ້ອະນຸມັດໃຫ້ບໍລິສັດອະສັງຫາລິມະຊັບ ຫວ່ານເຟີ້ງ ຊຽງໄຮ້ ສປ ຈີນ ພັດທະນາໃຫ້ເປັນ ເຂດຕົວເມືອງທ່ອງທ່ຽວໜອງນ້ຳທຳມະຊາດ ແລະ ວັດທະນະທຳ ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ, ສ້າງໜອງນ້ຳໃຫຍ່ຢູ່ໃຈກາງເມືອງ ໂດຍໂຄ່ງລ່າງພື້ນຖານຂອງການພັດທະນາຕ້ອງສອດຄ່ອງ ຕາມແຜນພັດທະນາລວມຂອງເຂດບຶງທາດຫຼວງ ພ້ອມທັງສອດຄ່ອງກັບແຜນຍຸດທະສາດ ການພັດທະນາ ຂພສ ຂອງລັດຖະບານ ທັງຕ້ອງຮັບປະກັນບົດບາດຂອງບຶງທາດຫຼວງ ໃນການເກັບກັກລະບາຍນ້ຳຈາກຕົວເມືອງ ໂດຍເນື້ອທີ່ທັງໝົດຂອງໂຄງການ 365 ເຮັກຕາ ແຕ່ໄລຍະເບື້ອງຕົ້ນນີ້ແມ່ນນຳໃຊ້ເປັນເຂດພັດທະນາ 303 ເຮັກຕາ ແລະ ຮັກສາເປັນເຂດກັນຊົນ 62 ເຮັກຕາ, ກວມເອົາ 6 ບ້ານຂອງເມືອງໄຊເສດຖາ ແລະ ເມືອງສີສັດຕະນາກ ຄື: ບ້ານເມືອງນ້ອຍ, ບ້ານໂນນຫວາຍ, ບ້ານໂນນຄໍ້ເໜືອ, ບ້ານໂພນທັນ, ບ້ານໂພນປ່າເປົ້າ ແລະ ບ້ານດອນກອຍ ໃນເນື້ອທີ່ສຳປະທານທີ່ລັດຖະບານ ໄດ້ອະນຸມັດໃຫ້ບໍລິສັດພັດທະນານັ້ນ ຈະມີກິດຈະການຕ່າງໆເຊັ່ນ: ຈັດສັນເຂດສວນທຳມະຊາດເຂດຂຽວ, ສວນດອກໄມ້, ສວນສາທາລະນະເພື່ອພັກຜ່ອນ, ສ້າງໜອງນ້ຳໃຫຍ່ໃຈກາງເມືອງ ພ້ອມດ້ວຍລະບົບລະບາຍນ້ຳ, ສ້າງຖະໜົນພາຍໃນເຂດ ປະຕູໂຂງເຂົ້າ-ອອກ, ສ້າງສູນກາງກິລາ, ສູນການຄ້າ ແລະ ບໍລິການ. ປະກອບມີໂຮງແຮມ 5 ດາວ, ຮ້ານຂັບພະສິນຄ້າ ແລະ ສະຖານທີ່ບັນເທີງຕາມລະບຽບການຂອງ ສປປ ລາວ ແລະ ເຂດທີ່ຢູ່ອາໄສປະກອບດ້ວຍ ເຮືອນວິລາລະດັບສູງແບບວັດທະນະທຳລາວ, ແບບເອີລົບ ແລະ ເຮືອນພັກແບບອາພາດເມັນ ສິ່ງປຸກສ້າງສະໜອງໃຫ້ແກ່ການທ່ອງທ່ຽວ ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳຂອງຊາດ ສ້າງຕັ້ງສຳນັກງານຫ້ອງການເຂດ ແລະ ກໍ່ສ້າງສະຖານທີ່ບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອ ເຊິ່ງການພັດທະນາ ເຂດເສດຖະກິດສະເພາະບຶງທາດຫຼວງ ມູນຄ່າການລົງທຶນທັງໝົດປະມານ 12.800 ຕື້ກີບ ແລະ ການພັດທະນາເຂດດັ່ງກ່າວ ນອກຈາກຈະມີລາຍຮັບທາງດ້ານພາສີອາກອນແລ້ວ ຍັງຈະປະກອບສ່ວນສ້າງວຽກເຮັດ

ງານທຳໃຫ້ແກ່ປະຊາຊົນ ສ້າງທຸລະກິດ ສະໜອງການບໍລິການປີ້ນອ້ອມ ຄຽງຄູ່ກັບສ້າງສະຖານທີ່ສາທາລະນະ ຕິດພັນກັບການສົ່ງເສີມການທ່ອງທ່ຽວແບບວັດທະນະທຳປະຫວັດສາດ ເຊິ່ງເປັນໂສມໜ້າໃໝ່ອັນສວຍງາມຂອງຊາວນະຄອນ-ຫຼວງວຽງຈັນ.

ໂຄງການພັດທະນາບຶງທາດຫຼວງນີ້ ຈະໄດ້ເລີ່ມຕົ້ນກໍ່ສ້າງໄລຍະທີ 1 ໃນເດືອນກຸມພາ 2012 ໂດຍຈະໄດ້ກໍ່ສ້າງໜອງນ້ຳໃຫຍ່ ແລະ ສວນສາທາລະນະ ເພື່ອຕ້ອນຮັບກອງປະຊຸມສຸດຍອດອາເຊັມ ຄັ້ງທີ 9 ທີ່ ສປປ ລາວ ເປັນເຈົ້າ-ພາບ ຈະໄດ້ຈັດຂຶ້ນໃນທ້າຍປີ 2012 ນີ້ ແລະ ຄາດວ່າຈະໃຊ້ໄລຍະເວລາການພັດທະນາໂຄງການນີ້ແມ່ນ 15-20 ປີ.

## *ໂຮງງານຜະລິດຝຸ່ນກາລີ ຈະສ້າງສຳເລັດທ້າຍປີນີ້*



ວັນທີ 4 ມັງກອນ 2012 ນີ້, ທ່ານ ສົມບູນ ລາຊາສິມບັດ, ລັດຖະມົນຕີຊ່ວຍວ່າການ ກະຊວງພະລັງງານ ແລະ ບໍ່ແຮ່, ທ່ານ ຄູນແກ້ວ ພັນສະຫວັດ, ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ນະຄອນຫຼວງວຽງຈັນ ພ້ອມຄະນະ ໄດ້ລົງຕິດຕາມເບິ່ງຄວາມຄືບໜ້າ ຂອງການກໍ່ສ້າງໂຮງງານຜະລິດຝຸ່ນກາລີ ຂອງບໍລິສັດ ຊິນໂນໄຮໂຮ ມາຍນິ້ງ ລາວ ຈຳກັດ.

ໂຮງງານແຫ່ງນີ້ແມ່ນມີທີ່ຕັ້ງຢູ່ບ້ານດົງບອງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ເປັນໂຄງການລົງທຶນຂອງນັກລົງທຶນຕ່າງປະເທດ (ສປ ຈີນ) ຢູ່ ສປປ ລາວ. ດ້ວຍມູນຄ່າການລົງທຶນສູງເຖິງ 96 ລ້ານກວ່າໂດລາສະຫະລັດ ຫຼື ປະມານ 700 ກວ່າຕື້ກີບ, ໂດຍໄດ້ສຳປະທານເນື້ອທີ່ດິນຈຳນວນ 11,96 ກິໂລຕາແມັດ ຢູ່ເຂດບ້ານວຽງແກ້ວ ຫ້ວຍເຕີຍ, ຫ້ວຍແດນເມືອງ ແລະ ບ້ານໂນນແສງຈັນ, ເມືອງໄຊທານີ ເປັນໄລຍະເວລາ 20 ປີ ນ□າລັດຖະບານລາວ ເພື່ອຂຸດຄົ້ນແຮ່ເກືອກາລີ ມາຜະລິດເປັນຝຸ່ນກາລີ ສົ່ງອອກໄປຍັງຕະຫຼາດຕ່າງປະເທດ ໂດຍສະເພາະຕະຫຼາດປະເທດໃກ້ຄຽງ ເປັນຕົ້ນແມ່ນປະເທດ ຈີນ ແລະ ສ.ສ ຫວຽດນາມ ໂດຍມີກຳລັງການຜະລິດເຖິງ 120.000 ໂຕນຕໍ່ປີ.

ໂຄງການແມ່ນກຳລັງຢູ່ໃນຂັ້ນຕອນການກໍ່ສ້າງ ຊຶ່ງໄດ້ເລີ່ມລົງມືມາແຕ່ທ້າຍປີ 2010 ແລະ ຄາດວ່າຈະສຳເລັດ ແລະ ດຳເນີນການທົດລອງຜະລິດໃນທ້າຍປີ 2012 ນີ້. ການກໍ່ສ້າງແມ່ນມີຄວາມຄືບໜ້າໄປໄວສົມຄວນ ສຳເລັດ

ປະມານ 50%. ນອກຈາກຈະສ້າງວຽກເຮັດງານທຳ ໃຫ້ແກ່ປະຊາຊົນລາວແລ້ວ ຍັງຈະສ້າງລາຍຮັບໃຫ້ແກ່ລັດຖະບານເຮົາຕື່ມອີກ.

ພາຍຫຼັງໄດ້ຮັບຟັງ ການລາຍງານສະພາບໂດຍລວມ ຈາກຜູ້ຮັບຜິດຊອບໂຄງການແລ້ວ, ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ຍັງໄດ້ສະແດງຄວາມຊົມເຊີຍ ຕໍ່ຄວາມບຸກບືນຂອງບໍລິສັດ ທີ່ເຮັດໃຫ້ໂຄງການມີຄວາມຄືບໜ້າໄປຕາມແຜນການທີ່ວາງໄວ້ ທ່ານຍັງຮຽກຮ້ອງມາຍັງ ບໍລິສັດການລົງທຶນຂຸດຄົ້ນແຮ່ ສິ່ງສຳຄັນໃຫ້ຄຳນຶງເຖິງບັນຫາສັງຄົມ ແລະ ສິ່ງແວດລ້ອມ, ໂດຍສະເພາະຄວາມເຂົ້າໃຈ ຂອງປະຊາຊົນເຂດອ້ອມຂ້າງໂຄງການເພື່ອຄວາມສະດວກໃຫ້ແກ່ສອງຝ່າຍ ໃນອະນາຄົດອັນຍາວນານ.

---

## *ທະນາຄານດີເດັ່ນແຫ່ງປີ 2011*

ທະນາຄານການຄ້າຕ່າງປະເທດລາວ (ທຄຕລ) ໄດ້ຮັບລາງວັນທະນາຄານດີເດັ່ນແຫ່ງປີ 2011 ແລະ ໃບຢັ້ງ-ຢືນ ISO 90012008 ທີ່ນະຄອນຫຼວງລອນດອນ ປະເທດອັງກິດ.

ຄ່ຳຄືນວັນທີ 28 ທັນວາ 2011 ຜ່ານມານີ້ ທະນາຄານການຄ້າຕ່າງປະເທດລາວ ກໍໄດ້ມີການສະຫຼອງລາງວັນອັນຊົງກຽດນີ້ຢ່າງຍິ່ງໃຫຍ່ ທີ່ສູນການຄ້າລາວ-ໄອເຕັກ ນະຄອນຫຼວງວຽງຈັນ ໂດຍມີທ່ານ ສົມສະຫວາດ ເລັ່ງສະຫວັດ

ຮອງນາຍົກລັດຖະມົນຕີ ທ່ານ ສອນໄຊ ສີດພະໄຊ, ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ພ້ອມດ້ວຍອ້າຍເອື້ອຍນ້ອງ ພະນັກງານອ້ອມຂ້າງ ທະນາຄານການຄ້າຕ່າງປະເທດລາວ ແຂກຮັບເຊີນເຂົ້າຮ່ວມຢ່າງຫຼວງຫຼາຍ.




ທ່ານ ວັນຄຳ ວໍລະວົງ, ຜູ້ຮັກສາການ ທະນາຄານການຄ້າຕ່າງປະເທດລາວ ໄດ້ກ່າວໃນງານວ່າ: ການຈັດແຂ່ງຂັນລາງວັນທະນາຄານດີເດັ່ນແຫ່ງປີ 2011 ນີ້ ນັບວ່າເປັນຄັ້ງທີ 12 ແລ້ວ ທີ່ສຳນັກພິມວາລະສານ The Banker ຊຶ່ງເປັນວາລະສານສາກົນ ຕັ້ງຢູ່ນະຄອນຫຼວງລອນດອນ, ປະເທດອັງກິດ ເປັນຜູ້ຈັດຂຶ້ນ. ສະເພາະການແຂ່ງຂັນໃນປີ 2011 ນີ້ ກໍໄດ້ມີທະນາຄານຈາກ 147 ປະເທດເຂົ້າຮ່ວມແຂ່ງຂັນ.

ຜ່ານການແຂ່ງຂັນ The Banker ໄດ້ພິຈາລະນາຫຼາຍຂັ້ນຕອນ ເບິ່ງການບໍລິຫານ ຂອງທະນາຄານການຄ້າຕ່າງປະເທດລາວ ຈຶ່ງຮັບຮູ້ວ່າ ທະນາຄານການຄ້າຕ່າງປະເທດລາວ ເປັນທະນາຄານທີ່ມີຫົວຄິດປະດິດສ້າງໃນການ

ດຳເນີນທຸລະກິດ ປະສົບຜົນສຳເລັດເກີນຄາດໝາຍ ແລະ ມີການເຕີບໃຫຍ່ຂະຫຍາຍຕົວຂຶ້ນຢ່າງຕໍ່ເນື່ອງ ດ້ວຍເຫດນີ້ ທະນາຄານການຄ້າຕ່າງປະເທດລາວ ຈຶ່ງໄດ້ຮັບລາງວັນດີເດັ່ນແຫ່ງປີ 2011 ນີ້ໄປຄອງ.

## *ບໍ່ຄຳເຊໂປນ ຈ່າຍອາກອນລ່ວງໜ້າ ເພື່ອບັນເທົາທຸກຜູ້ປະສົບໄພນ້ຳຖ້ວມ*

ບໍລິສັດ ເອັມເອັມຈີ ລ້ານຊ້າງມິເນໂລນ ເຊໂປນ ໄດ້ມອບແຊັກເງິນ ຈຳນວນ 30 ລ້ານໂດລາສະຫະລັດ (ປະມານ 239 ຕື້ກ່ວາກີບ) ໃຫ້ແກ່ລັດຖະບານລາວ ໃນວັນທີ 28 ພະຈິກ 2011 ການຈ່າຍອາກອນລ່ວງໜ້າດັ່ງກ່າວນີ້ ຈະເຮັດໃຫ້ລັດຖະບານ ສາມາດບໍລິຫານການເງິນສະດວກຂຶ້ນ ເພື່ອຊ່ວຍບັນເທົາທຸກໃຫ້ແກ່ ຫຼາຍເຂດແຂວງທີ່ປະສົບໄພນ້ຳຖ້ວມຢ່າງຮ້າຍແຮງໃນໄລຍະບໍ່ດົນຜ່ານມານີ້ ເຊິ່ງລັດຖະບານ ປະເມີນມູນຄ່າຂອງການເສຍຫາຍຈາກໄພນ້ຳຖ້ວມໃນຄັ້ງນີ້ ເທົ່າກັບປະມານ 140 ລ້ານໂດລາສະຫະລັດ.




ການຈ່າຍອາກອນລ່ວງໜ້າໃນຄັ້ງນີ້ ແມ່ນສ່ວນໜຶ່ງຂອງຈຳນວນອາກອນກຳໄລທັງໝົດທີ່ຄາດຄະເນໄວ້ສຳລັບປີ 2011 ທີ່ຈະຕ້ອງຈ່າຍ ໃນເດືອນມີນາ ປີ 2012 ນອກຈາກອາກອນກຳໄລແລ້ວ ລັດຖະບານລາວ ຍັງໄດ້ມີລາຍຮັບໂດຍກົງຈາກຄ່າພາກຫຼວງ ຄ່າສຳປະທານເນື້ອທີ່ຂອງສັນຍາ ຫຼື ເຂດຂຸດຄົ້ນ ອາກອນເງິນເດືອນພະນັກງານ ແລະ ເງິນປັນຜົນຈາກການຖືຮຸ້ນ 10% ນ□າບໍ່ຄຳເຊໂປນ ນອກຈາກບໍ່ຄຳເຊໂປນ ໄດ້ສ້າງລາຍໄດ້ໂດຍກົງໃຫ້ແກ່ລັດຖະບານລາວ ໄດ້ຫຼາຍກ່ວາ 600 ລ້ານໂດລາສະຫະລັດແລ້ວ ນັບຕັ້ງແຕ່ໂຄງການໄດ້ເລີ່ມຕົ້ນການຜະລິດເປັນຕົ້ນມາ.

ຫວ່າງບໍ່ດົນມານີ້ ຫົວໜ້າຄະນະຜູ້ບໍລິຫານຂອງບໍລິສັດ ເອັມເອັມຈີ ທ່ານ ເອັນດຣູ ມິເຊວມໍຣ (Andrew Michelmore) ໄດ້ມາຢ້ຽມຢາມ ສປປ ລາວ ໄດ້ໃຫ້ການສະໜັບສະໜູນໃນນາມຂອງບໍລິສັດແກ່ບັນດາຜູ້ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ຊຶ່ງໄດ້ເຂົ້າພົບທ່ານ ສຸລິວົງ ດາຣາວົງ ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່ ໃນໄລຍະການມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້.

## *ໄຂນຳໃຊ້ທາງຫຼວງແຫ່ງຊາດ ເລກທີ 14A*



ທາງຫຼວງແຫ່ງຊາດ ເລກທີ 14A ແຕ່ຫ້ວຍເພັກ, ເມືອງໂພນທອງ, ແຂວງຈຳປາສັກ ໄດ້ໄຂນຳໃຊ້ເປັນທາງການ ເຊິ່ງພິທີມອບ-ຮັບເສັ້ນທາງດັ່ງກ່າວ ໄດ້ມີຂຶ້ນໃ ວັນທີ 31 ທັນວາ 2011 ຢູ່ສຳນັກງານປົກຄອງເມືອງຈຳປາສັກ ໂດຍມີ ທ່ານ ເຈືອງ ສົມບູນຂັນ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ທ່ານ ສອນໄຊ ສີພັນດອນ, ເຈົ້າແຂວງຈຳປາສັກ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ທ່ານ ອຸດອນ ແກ້ວດວງດີ, ອຳນວຍການ ບໍລິສັດດວງດີກໍ່ສ້າງຂົວທາງຈຳກັດ ຜູ້ຮັບເໝົາໂຄງການກໍ່ສ້າງ ທາງຫຼວງແຫ່ງຊາດ ເລກທີ 14A ໄດ້ກ່າວວ່າ: ເສັ້ນທາງແຫ່ງຊາດເລກທີ 14A ເປັນເສັ້ນທາງບູລິມະສິດທີ່ສຳຄັນ ຂອງ ລັດຖະບານ ກໍຄືແຂວງຈຳປາສັກ ເປັນເສັ້ນທາງຍຸດທະສາດທີ່ສຳຄັນ ໃນການເຊື່ອມຕໍ່ໄປສູ່ເຂດມໍລະດົກໂລກ ວັດພູ ຈຳປາສັກ ບັນດາເມືອງທີ່ຢູ່ຝັ່ງຕາເວັນຕົກ ຂອງແມ່ນ້ຳຂອງ ແລະ ຈະເຊື່ອມຕໍ່ອະນຸພາກພື້ນໃນອະນາຄົດ. ເສັ້ນທາງ ເລກທີ 14A ໄລຍະທີ 1 ແຕ່ບ້ານຫ້ວຍເພັກ, ເມືອງໂພນທອງ, ຫາ ບ້ານພິນ, ເມືອງຈຳປາສັກ ຍາວ 25 ກິໂລແມັດ, ເປັນທາງ 4 ຊັ້ນ ໜ້າທາງກ້ວາງ 9 ແມັດ ໃນນີ້ ໜ້າທາງປູດ້ວຍຢາງອັດຊະຟານ 7 ແມັດ ແລະ ບ່າທາງປູດ້ວຍຢາງ 2 ຊັ້ນ ເບື້ອງລະ 1 ແມັດ, ມີຂົວເບຕົງເສີມເຫຼັກ 9 ແຫ່ງ ມີທໍ່ລອດທາງ 87 ແຫ່ງ, ມູນຄ່າການກໍ່ສ້າງທັງໝົດ 20.372.136,86 ໂດລາສະຫະລັດ ຫຼື ປະມານ 162.467.712.000 ກີບ.

---

## *ຫາແຫຼ່ງທຶນໃນການພັດທະນາໄຟຟ້າຕາມເສັ້ນທາງ*




ພິທີເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບ ການສຶກສາຄວາມເປັນໄປໄດ້ ເພື່ອຊອກຫາແຫຼ່ງທຶນ ໃນການພັດ-ທະນາໄຟຟ້າແສງສະຫວ່າງຕາມເສັ້ນທາງ, ສະຖານທີ່ສາທາລະນະໃນນະຄອນຫຼວງວຽງຈັນ ລະຫວ່າງ ພະແນກໂຍທາ

ທິການ-ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ບໍລິສັດ ນາແຣ ອີເລັກຕຣິກ ຈຳກັດ ສ.ເກົາຫຼີ ໄດ້ຈັດຂຶ້ນໃນວັນທີ 6 ມັງກອນ 2012 ທີ່ໂຮງແຮມລາວພລາຊາ, ນະຄອນຫຼວງວຽງຈັນ.

ໂຄງການດັ່ງກ່າວ, ແມ່ນຈະເລັ່ງໃສ່ບັນດາເສັ້ນທາງ ສວນສາທາລະນະ ລວມທັງອາຄານສະຖານທີ່ສຳນັກງານ ຮັບປະກັນຄວາມປອດໄພ ໃນການສັນຈອນຢູ່ໃນນະຄອນຫຼວງ ທີ່ເຫັນວ່າຍັງບໍ່ທັນຮັບປະກັນ ແລະ ບາງແຫ່ງທີ່ຫາກໍປັບ-ປຸງສ້າງສຳເລັດ ເຊິ່ງຄາດວ່າຈະໃຫ້ສຳເລັດພາຍໃນ 12 ເດືອນ ຫຼືໄວກ່ວານັ້ນ ພາຍຫຼັງທີ່ມີການເຊັນບົດບັນທຶກຮ່ວມກັນ.

ເຂົ້າຮ່ວມພິທີເຊັນສັນຍາຄັ້ງນີ້ມີທ່ານ ເດດສົງຄາມ ທຳມະວົງ ຫົວໜ້າພະແນກໂຍທາທິການ-ຂົນສົ່ງນະຄອນ-ຫຼວງວຽງຈັນ ແລະ ທ່ານ ປັກ ຈົງໂຮ ປະທານບໍລິສັດ ນາແຣ ອີເລັກຕຣິກ ຈຳກັດ ສ.ເກົາຫຼີ ເຊິ່ງມີທ່ານ ແກ້ວພິລາວັນ ອາໄພລາດ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ບັນດາທ່ານເຈົ້າເມືອງ ຮອງເຈົ້າເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

---

## *ກະຊວງການເງິນ ເອົາໃຈໃສ່ການເກັບລາຍຮັບຈາກທີ່ດິນ*

ກົມສ່ວຍສາອາກອນ, ກະຊວງການເງິນ ຈັດກອງປະຊຸມຜັນຂະຫຍາຍ ຂໍ້ຕົກລົງວ່າດ້ວຍ “ການມອບໂອນການເກັບລາຍຮັບຈາກທີ່ດິນ” ທັງນີ້ເພື່ອປຶກສາຫາລື ແລະ ມີຄວາມເຂົ້າໃຈເປັນເອກະພາບກ່ຽວກັບວິທີການຈັດຕັ້ງປະຕິບັດການມອບ-ໂອນ ການເກັບລາຍຮັບຈາກທີ່ດິນຢູ່ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ຊຶ່ງຕົວເລກຂອງການເກັບລາຍຮັບ ກົມກ່ຽວຂ້ອງຈະໄດ້ແນະນຳທາງດ້ານວິຊາສະເພາະ ແລະ ວິທີການຈັດເກັບລາຍຮັບຈາກພາສີທີ່ດິນ ຄ່າເຊົ່າສຳປະທານ ທັນສິດນຳໃຊ້ທີ່ດິນ ແລະ ອື່ນໆທີ່ຕິດພັນກັບທີ່ດິນ.

ທ່ານ ດຣ. ນາງ ວຽງທອງ ສີພັນດອນ. ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ໄດ້ກ່າວວ່າ: ລາຍຮັບຈາກທີ່ດິນ ແມ່ນແຫຼ່ງລາຍຮັບໜຶ່ງທີ່ໝັ້ນທ່ຽງ ແລະ ມີຄວາມຍືນຍົງ ຊຶ່ງໃນມະຕິກອງປະຊຸມໃຫຍ່ ຄັ້ງທີ IX ໄດ້ກຳນົດແຈ້ງວ່າ: "ອົງການລັດສູນກາງ ແລະ ທ້ອງຖິ່ນ ຕ້ອງເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງຊັບສິນຂອງລັດ ໂດຍສະເພາະແມ່ນດິນ ຊັບໃນດິນສິນໃນນ້ຳ ແລະ ຊັບພະຍາກອນທີ່ມີຄ່າອື່ນໆ ບໍ່ໃຫ້ຕົກເຮ່ຍເສຍຫາຍ ຕ້ອງຮີບຮ້ອນປັບປຸງແກ້ໄຂ ແລະ ຕ້ອງມີການແບ່ງຂັ້ນຄຸ້ມຄອງໃຫ້ຈະແຈ້ງຕື່ມອີກ..." ສຳລັບຂະແໜງການໆເງິນແລ້ວ ວຽກງານຄຸ້ມຄອງການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ແມ່ນເປັນໜ້າວຽກຕົ້ນຕໍ ແລະ ສຳຄັນ ສະນັ້ນ ຈຶ່ງຕ້ອງໄດ້ມີການປຶກສາຫາລືແລກປ່ຽນບົດຮຽນ ຈັດຝຶກອົບຮົມຍົກລະດັບທາງດ້ານວິຊາການ ໃຫ້ແກ່ລັດຖະກອນ. ພ້ອມດຽວກັນນັ້ນ, ຕ້ອງໄດ້ມີການສຶກສາອົບຮົມດ້ານການເມືອງ-ແນວຄິດ, ຄຸນທາດ ແລະ ຈັນຍາບັນຂອງພະນັກງານ ເພື່ອຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ວຽກງານການເກັບລາຍຮັບ ໃຫ້ໄດ້ຕາມແຜນ ຫຼື ລື່ນແຜນການທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາ.

ກອງປະຊຸມຄັ້ງນີ້, ຈະເຮັດໃຫ້ວຽກງານມອບ-ໂອນການເກັບລາຍຮັບຈາກທີ່ດິນ ໄດ້ຮັບຜົນສຳເລັດທັນຕາມກຳນົດເວລາ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ ສາມາດນຳໄປຈັດຕັ້ງປະຕິບັດ ໄດ້ຢ່າງມີປະສິດທິຜົນບົນຈິດໃຈ 4 ບຸກທະລຸ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ IX ກຳນົດໄວ້ ເພື່ອເຮັດໃຫ້ວຽກງານຄຸ້ມຄອງເກັບລາຍຮັບຈາກທີ່ດິນມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ປະຕິບັດຕົວເລກຄາດໝາຍໄດ້ລື່ນແຜນການທີ່ວາງໄວ້.

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 4 ມັງກອນ 2012 ທີ່ສູນຮ່ວມມືສາກົນ ແລະ ການຝຶກອົບຮົມ (ຫຼັກ 5) ຊຶ່ງມີບັນດາຕາງໜ້າກົມ ພະແນກການອ້ອມຂ້າງກະຊວງການເງິນ ທັງສູນກາງ ແລະ ທ້ອງຖິ່ນເຂົ້າຮ່ວມ.

---